**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ມະຫາວິທະຍາໄລ ສຸພານຸວົງ ເລກທີ.253/ມສ

ຫຼວງພະບາງ, ວັນທີ.16....ກໍລະກົດ, 2024

# ແຈ້ງການ

**ຮຽນ/ເຖິງ :** ຫົວໜ້າພະແນກສຶກສາທິການ ແລະ ກິລາ ປະຈຳແຂວງພາກເໜືອ, ຄະນະບໍດີ, ຫົວໜ້າຫ້ອງການ, ຜູ້ອຳນວຍການສູນ, ອາຈານ, ພະນັກງານ, ນັກຮຽນທີ່ຈົບມັດທະຍົມຕອນປາຍ ຕະຫຼອດຮອດພໍ່ແມ່ຜູ້ປົກຄອງນັກຮຽນ.

**ເລື່ອງ :** ການສອບເສັງຄັດເລືອກນັກສຶກສາເຂົ້າຮຽນຕໍ່ ຢູ່ທີ່ມະຫາວິທະຍາໄລສຸພານຸວົງ (ມສ) ຫຼັກສູດລະດັບປະລິນຍາຕີ (4-5 ປີ) ປະຈຳສົກສຶກສາ 2024-2025.

- **ອີງຕາມ** ແຈ້ງການຂອງກະຊວງສຶກສາທິການ ແລະ ກິລາ ກ່ຽວກັບການຈັດຕັ້ງການສອບເສັງຄັດເລືອກເອົານັກສຶກສາເຂົ້າຮຽນຕໍ່ ທີ່ມະຫາວິທະຍາໄລ 04 ແຫ່ງ ແລະ ສະຖາບັນການສຶກສາຊັ້ນສູງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ປະຈຳສົກສຶກສາ 2024-2025, ສະບັບເລກທີ 811/ສສກ, ລົງວັນທີ 21 ມິຖຸນາ 2024.

ຄະນະກຳມະການຈັດຕັ້ງການສອບເສັງປະຈຳມະຫາວິທະຍາໄລ ສຸພານຸວົງ, ຂໍຖືເປັນກຽດແຈ້ງມາຍັງທ່ານກ່ຽວກັບການສອບເສັງເຂົ້າຮຽນໃນລະດັບປະລິນຍາຕີ ຢູ່ທີ່ມະຫາວິທະຍາໄລສຸພານຸວົງ ສົກ 2024-25, ລາຍລະອຽດ ມີດັ່ງລຸ່ມນີ້:

1. **ການຈັດຕັ້ງການສອບເສັງ:**
   ມະຫາວິທະຍາໄລ ສຸພານຸວົງ ເປັນເຈົ້າການໃນການຈັດຕັ້ງການສອບເສັງ ແລະ ຄັດເລືອກເອົານັກສຶກສາເຂົ້າຮຽນທີ່ມະຫາວິທະຍາໄລ ສຸພານຸວົງ.
2. **ສະຖານທີ່ຈັດຕັ້ງການສອບເສັງ:**
   ສູນສອບເສັງມະຫາວິທະຍາໄລ ສຸພານຸວົງ ເຊິ່ງຕັ້ງຢູ່ທີ່ນະຄອນຫຼວງພະບາງ, ແຂວງຫຼວງພະບາງ
3. **ສະຖານທີ່ຮັບ ແລະ ຍື່ນໃບສະໝັກເຂົ້າສອບເສັງ:**
   1. **ຮັບໃບສະໝັກເຂົ້າສອບເສັງ:**
      1. ສາມາດດາວໂຫຼດແບບຟອມໃບສະໝັກເຂົ້າສອບເສັງໄດ້ ໂດຍຜ່ານເວັບໄຊ www.su.edu.la ຫຼື www.facebook.com/souphanouvong-univ
      2. ສາມາດພິມພັບຮັບໃບສະໝັກເຂົ້າສອບເສັງໄດ້ທີ່ ຫ້ອງການວິຊາການ (ຫ້ອງເບີ 105) ຢູ່ຕຶກສຳນັກງານອະທິການບໍດີ, ວິທະຍາເຂດບ້ານດອນໃໝ່, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ
   2. **ຍື່ນໃບສະໝັກສອບເສັງ:**
      - ຢູ່ທີ່ຕຶກວິທະຍາສາດ (ຂ້າງສະໂມສອນໃຫຍ່) ມະຫາວິທະຍາໄລສຸພານຸວົງ, ວິທະຍາເຂດບ້ານດອນໃໝ່ ເຊິ່ງເລີ່ມແຕ່ວັນທີ **17/07/2024 ຫາ** ວັນທີ **15/08/2024**. ພ້ອມທັງຈ່າຍເງິນຄ່າບໍລິການສອບເສັງ 40,000 ກີບ ຕໍ່ 1 ຄົນ, ແລ້ວຮັບໃບເຂົ້າຫ້ອງສອບເສັງໃນວັນດຽວກັນ.
4. **ວັນ, ເດືອນ, ປີສອບເສັງຄັດເລືອກນັກສຶກສາ**
   - ວັນສຸກ, ວັນທີ 16/08/2024 (ສອບເສັງແບບເຊິ່ງໜ້າ)
5. **ວິຊາສອບເສັງ - ກຸ່ມສອບເສັງ ແລະ ວັນ - ເວລາສອບເສັງ**
   1. ກຸ່ມສອບເສັງໃນສາຍ A (STEM: ວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ)

| ຕອນ | ເວລາ | ໄລຍະເວລາ | ວິຊາສອບເສັງ | ໝາຍເຫດ |
|---|---|---|---|---|
| ເຊົ້າ | 09:00-11:00 ມ | 120 ນາທີ | ຄະນິດສາດ A + ຟີຊິກສາດ | 40 ຂໍ້ |
| ບ່າຍ | 14:00-16:00 ມ | 90 ນາທີ | ເຄມີສາດ+ຊີວະສາດ+ພາສາລາວ-ວັນນະຄະດີ+ພາສາອັງກິດ | 40 ຂໍ້ |



CS สแกนด้วย CamScanner

2. ກຸ່ມສອບເສັງໃນສາຍ B (NON-STEM: ວິທະຍາສາດສັງຄົມ)

| ຕອນ | ເວລາ | ໄລຍະເວລາ | ວິຊາສອບເສັງ | ໝາຍເຫດ |
|---|---|---|---|---|
| ເຊົ້າ | 09:00-11:00 ມ | 120 ນາທີ | ຄະນິດສາດ B + ພາສາລາວ-ວັນນະຄະດີ | 40 ຂໍ້ |
| ບ່າຍ | 14:00-15:30 ມ | 90 ນາທີ | ພູມສາດ+ປະຫວັດສາດ+ພາສາອັງກິດ | 40 ຂໍ້ |

6. **ສາຂາວິຊາຮຽນ ທີ່ມີການເປີດສອບຢູ່ພາຍໃນ ມະຫາວິທະຍາໄລ ສຸພານຸວົງ:**

| I. ກຸ່ມ A (STEM: ວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ) ມີ 22 ສາຂາວິຊາ: | | | | |
|---|---|---|---|---|
| ລ/ດ | ຊື່ຄະນະວິຊາ | ລ/ດ | ຊື່ສາຂາວິຊາ (ຫຼັກສູດ) | ຊື່ຫຍໍ້ |
| 1 | ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້ | 1 | ວິທະຍາສາດພືດ | PLS |
| | | 2 | ວິທະຍາສາດການລ້ຽງສັດ | ANS |
| | | 3 | ຊັບພະຍາກອນປ່າໄມ້ | FOR |
| | | 4 | ວິທະຍາສາດ ແລະ ເຕັກໂນໂລຊີອາຫານ | FST |
| | | 5 | ສັດຕະວະແພດ | VET |
| 2 | ຄະນະສຶກສາສາດ | 6 | ຄູຄະນິດສາດ | MTH |
| | | 7 | ຄູເຄມີສາດ | CHE |
| | | 8 | ຄູຟີຊິກສາດ | PHT |
| | | 9 | ຄູໄອຊີທີ | ICT |
| 3 | ຄະນະວິສະວະກຳສາດ | 10 | ວິສະວະກຳໄຟຟ້າ | EEE |
| | | 11 | ວິສະວະກຳຄອມພິວເຕີ | CPE |
| | | 12 | ວິສະວະກຳໂຍທາ | CVE |
| | | 13 | ເຕັກໂນໂລຊີໂລຈິດສຕິກ | TLG |
| | | 14 | ວິສະວະກຳວັດສະດຸສາດ | MSE |
| | | 15 | ວິສະວະກຳເອເລັກໂຕຣນິກ ແລະ ການສື່ສານ | ECE |
| | | 16 | ວິສະວະກຳໄອທີ | ITE |
| 4 | ຄະນະສະຖາປັດຕະຍະກຳສາດ | 17 | ສະຖາປັດຕະຍະກຳ | ARC |
| | | 18 | ສະຖາປັດຕະຍະກຳພາຍໃນ | IAR |
| | | 19 | ບໍລິຫານງານສະຖາປັດ | ARM |
| | | 20 | ສະຖາປັດຕະຍະກຳລາວ | BLA |
| | | 21 | ອອກແບບຜະລິດຕະພັນ ແລະ ບັນຈຸພັນ | PPD |
| II. ກຸ່ມ B (NON-STEM: ວິທະຍາສາດສັງຄົມ) ມີ 20 ສາຂາວິຊາ: | | | | |
| ລ/ດ | ຊື່ຄະນະວິຊາ | ລ/ດ | ຊື່ສາຂາວິຊາ (ຫຼັກສູດ) | ຊື່ຫຍໍ້ |
| 1 | ຄະນະສຶກສາສາດ | 1 | ຄູວິທະຍາສາດການເມືອງ | POS |
| | | 2 | ຄູພາສາອັງກິດ | ELT |
| | | 3 | ຄູພາສາລາວ-ວັນນະຄະດີ | LLT |
| 2 | ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້ | 4 | ທ່ອງທ່ຽວນິເວດ | ECT |
| | | 5 | ພັດທະນາຊົນນະບົດ | RUD |
| | | 6 | ພັດທະນາຜະລິດຕະພັນກະສິກຳ ແລະ ການຕະຫຼາດ | ADM |
| 3 | ຄະນະເສດຖະສາດ ແລະ ການທ່ອງທ່ຽວ | 7 | ເສດຖະສາດ | ECO |
| | | 8 | ບໍລິຫານທຸລະກິດທົ່ວໄປ | GMB |
| | | 9 | ທຸລະກິດລະຫວ່າງປະເທດ | IBM |



CS สแกนด้วย CamScanner

| | | | | |
|---|---|---|---|---|
| | | 10 | ທຸລະກິດໄອທີ | ITB |
| | | 11 | ບໍລິຫານການທ່ອງທ່ຽວ | TMG |
| | | 12 | ບໍລິຫານການໂຮງແຮມ | HTL |
| | | 13 | ການເງິນ-ການທະນາຄານ | FNB |
| | | 14 | ການບັນຊີ | ACC |
| | | 15 | ການຄ້າສາກົນ | INC |
| 4 | ຄະນະພາສາສາດ | 16 | ພາສາ ແລະ ວັດທະນະທຳລາວ | LLC |
| | | 17 | ພາສາອັງກິດທົ່ວໄປ | GEL |
| | | 18 | ສື່ສານມວນຊົນ | MCO |
| | | 19 | ພາສາເກົາຫຼີ | GKL |
| | | 20 | ພາສາຫວຽດນາມ | GVL |
| | | 21 | ພາສາຈີນ | GCL |
| **ລວມທັງໝົດ 42 ສາຂາວິຊາ, 6 ຄະນະວິຊາ** | | | | |

7. **ການເລືອກສາຂາວິຊາຮຽນ:** ນັກສອບເສັງມີສິດເລືອກສາຂາວິຊາຮຽນທີ່ຕົນເອງມັກໄດ້ 3 ສາຂາວິຊາໃນກຸ່ມດຽວກັນເທົ່ານັ້ນ *(1 ແມ່ນວິຊາທີ່ມັກຫຼາຍທີ່ສຸດ, 2 ແມ່ນວິຊາສຳຮອງທີໜຶ່ງ ແລະ 3 ແມ່ນວິຊາສຳຮອງທີສອງ).*
8. **ເອກະສານປະກອບຄຳຮ້ອງຂໍສອບເສັງ:**
1. ນັກຮຽນທີ່ຮຽນຈົບ ມ.ປາຍ ຜ່ານມາແລ້ວໃຫ້ສຳເນົາ (copy) ປະກາສະນີຍະບັດຈົບຊັ້ນ ມ.ປາຍສະບັບແທ້ ຫຼື ຊົ່ວຄາວ ຫຼື ປະກາສະນີຍະບັດທຽບເທົ່າ (ໃຫ້ເອົາສະບັບຈິງມາຢັ້ງຢືນ)
2. ນັກຮຽນທີ່ຮຽນຈົບ ມ.ປາຍ ໃນສົກຮຽນ 2023-2024 ຖ້າບໍ່ທັນໄດ້ຮັບປະກາສະນີຍະບັດຈົບ ມ.ປາຍ ໃຫ້ສຳເນົາ (copy) ບັດເຂົ້າຫ້ອງສອບເສັງຈົບຊັ້ນ ມ.ປາຍ (ພ້ອມທັງເອົາສະບັບຈິງມາຢັ້ງຢືນ)
3. ຮູບຖ່າຍ 3x4cm ຈຳນວນ 3 ໃບ (ຮູບຖ່າຍຕິດປະກາສະນີຍະບັດ ຊັ້ນມັດທະຍົມປາຍ)

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ຂໍຄວາມຮ່ວມມືຈາກບັນດາທ່ານຈົ່ງຊ່ວຍແຈ້ງໃຫ້ນັກຮຽນ ທີ່ຮຽນຈົບມັດທະຍົມຕອນປາຍ ຫຼື ທຽບເທົ່າ ແລະ ຜູ້ປົກຄອງນັກຮຽນຮັບຊາບໂດຍທົ່ວເຖິງກັນດ້ວຍ.

ປະທານ ຄະນະກຳມະການສອບເສັງ

ອະທິການບໍດີ

ຮສ.ປທ. ວິລະ ອາໂນວັກ



สแกนด้วย CamScanner